ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 137 /ລບ

ນະຄອນຫຼວງວຽງຈັນ, ວັນທີ 18.4.2014

# ດຳລັດ
# ວ່າດ້ວຍຄົນພິການ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບປັບປຸງ ເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍແຮງງານ ສະບັບປັບປຸງ ເລກທີ 06/ສພຊ, ລົງວັນທີ 27 ທັນວາ 2006;
- ອີງຕາມກົດໝາຍວ່າດ້ວຍການອະນາໄມ, ກັນພະຍາດ ແລະສົ່ງເສີມສຸຂະພາບ ສະບັບເລກທີ 08/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມກົດໝາຍວ່າດ້ວຍການປິ່ນປົວ ສະບັບເລກທີ 09/ສພຊ,ລົງວັນທີ 09 ພະຈິກ 2005;
- ອີງຕາມກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງ ເລກທີ 04/ ສພຊ, ລົງວັນທີ 3 ກໍລະກົດ 2007;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 0505/ຮສສ, ລົງວັນທີ 24 ກຸມພາ 2014.

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະມາດຕະການໃນການປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງຄົນພິການ ເພື່ອເຮັດໃຫ້ຄົນພິການໄດ້ຮັບການກັນພະຍາດ, ສົ່ງເສີມສຸຂະພາບ, ການປິ່ນປົວ, ການຟື້ນຟູສຸຂະພາບ, ການສຶກສາ, ການຝຶກອົບຮົມວິຊາຊີບ, ການມີອາຊີບທີ່ໝັ້ນຄົງ, ການເຂົ້າເຖິງຂໍ້ມູນຂ່າວສານ, ແຫຼ່ງທຶນ, ສະຖານທີ່ບໍລິການ ແລະການຈັດຕັ້ງຂອງຄົນພິການ, ແນໃສ່ລຶບລ້າງທຸກຮູບການຈຳແນກຕໍ່ຄົນພິການ, ສ້າງເງື່ອນໄຂໃຫ້ເຂົາເຈົ້າໄດ້ຮັບການພັດທະນາຕົນເອງ, ເພິ່ງຕົນເອງ ແລະສາມາດເຂົ້າຮ່ວມກິດຈະກຳຕ່າງໆໃນສັງຄົມ.

### ມາດຕາ 2 ຄົນພິການ

ຄົນພິການ ແມ່ນຜູ້ມີຄວາມບົກຜ່ອງ ຫຼືສູນເສຍໜ້າທີ່ການຂອງອະໄວຍະວະ ແລະ ອົງຄະສ່ວນໃດໜຶ່ງຂອງຮ່າງກາຍ, ຈິດໃຈ, ມັນສະໝອງ, ສະຕິປັນຍາ ລວມທັງການເບິ່ງເຫັນ, ການໄດ້ຍິນ ແລະການປາກເວົ້າ ໂດຍບໍ່ຈຳແນກສາຍເຫດຂອງຄວາມເປັນພິການ, ຊຶ່ງຄວາມເປັນພິການນັ້ນ ໄດ້ເປັນອຸປະສັກໃນການເຄື່ອນໄຫວກິດຈະກຳປະຈຳວັນ ແລະການເຂົ້າຮ່ວມກິດຈະກຳທາງສັງຄົມຢ່າງເຕັມສ່ວນ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ພິການ ໝາຍເຖິງ ຄວາມບົກຜ່ອງ ຫຼືການສູນເສຍໜ້າທີ່ການຂອງອະໄວຍະວະ ຫຼືອົງຄະຂອງຮ່າງກາຍ, ຈິດໃຈ, ມັນສະໝອງ, ສະຕິປັນຍາ, ການເບິ່ງ, ການໄດ້ຍິນ ແລະການປາກເວົ້າ;
2. ການຈຳແນກຄວາມເປັນພິການ ໝາຍເຖິງ ທຸກການປະພຶດທີ່ມີລັກສະນະລັງກຽດ, ສຽດສີ, ເຍາະເຍີ້ຍ, ກີດກັ້ນ, ຈຳກັດ ແລະປະຕິເສດຕໍ່ຄົນພິການ;
3. ການສ້າງສິ່ງອຳນວຍຄວາມສະດວກ ໝາຍເຖິງ ການສ້າງ ແລະປັບປຸງສະພາບແວດລ້ອມ ເຊັ່ນ ຕຶກ, ອາຄານ, ຖະໜົນ, ຫົນທາງ ແລະສະຖານທີ່ບໍລິການຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ຄົນພິການ;
4. ເຄື່ອງຄ້ຳຊູ ໝາຍເຖິງ ອຸປະກອນທີ່ນຳໃຊ້ສຳລັບການເຄື່ອນໄຫວກິດຈະກຳຕ່າງໆ ແລະການດຳລົງຊີວິດຂອງຄົນພິການ ເຊັ່ນ ອົງຄະທຽມ, ຫູາບຂາທຽມ, ໄມ້ຄ້ອນເທົ້າ, ໄມ້ຄ້ຳເທົ້າ ແລະອື່ນໆ;
5. ເຄື່ອງຊ່ວຍຊູ ໝາຍເຖິງ ອຸປະກອນທີ່ນຳໃຊ້ສຳລັບການເຄື່ອນໄຫວກິດຈະກຳຕ່າງໆ ແລະການດຳລົງຊີວິດຂອງຄົນພິການ ເຊັ່ນ ລໍ້ເລື່ອນ, ລໍ້ໂຍກ, ຫູາບເລົ່າຄົງ ແລະອື່ນໆ;
6. ສະຖານທີ່ສາທາລະນະ ໝາຍເຖິງ ສະຖານທີ່ຕ່າງໆ ເປັນຕົ້ນ ໂຮງຮຽນ, ໂຮງໝໍ, ວັດ, ສວນສາທາລະນະ, ແຫຼ່ງທ່ອງທ່ຽວ, ສະໜາມກິລາ, ສະໜາມບິນ, ທ່າເຮືອ, ຕະຫຼາດ, ສະຖານີຈອດລົດ, ປ້ຳນ້ຳມັນ, ສະຖານທີ່ຈັດງານ, ທະນາຄານ ແລະອື່ນໆ.

### ມາດຕາ 4 ນະໂຍບາຍຂອງລັດ ຕໍ່ຄົນພິການ

ລັດ ສົ່ງເສີມສິດທິອັນຊອບທຳຂອງຄົນພິການ ດ້ວຍການສ້າງເງື່ອນໄຂໃຫ້ຄົນພິການ ໄດ້ຮັບການຊ່ວຍເຫຼືອ, ເບິ່ງແຍງລ້ຽງດູ, ປິ່ນປົວ, ຟື້ນຟູສຸຂະພາບ, ການສຶກສາ, ການຝຶກວິຊາຊີບ, ການມີວຽກເຮັດງານທຳ, ການເຂົ້າເຖິງສະຖານທີ່ສາທາລະນະ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ແຫຼ່ງທຶນ ເພື່ອພັດທະນາຕົນເອງ ແລະກຸ່ມຕົນເອງ.

ລັດ ຊຸກຍູ້ ແລະສົ່ງເສີມໃຫ້ມີການສ້າງຕັ້ງ ສະມາຄົມຄົນພິການ, ມູນນິທິ ແລະກອງທຶນພັດທະນາຄົນພິການ, ສຶກສາອົບຮົມ ແລະປູກຈິດສຳນຶກໃຫ້ປວງຊົນເຂົ້າໃຈ, ເມດຕາ, ຊ່ວຍເຫຼືອ, ປົກປ້ອງສິດທິຂອງຄົນພິການ ລວມທັງການປ້ອງກັນຄວາມເປັນພິການ.

ລັດ ຊຸກຍູ້ ແລະສົ່ງເສີມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງສັງຄົມ ທັງພາຍໃນ ແລະຕ່າງປະເທດ ປະກອບສ່ວນທາງດ້ານທຶນຮອນ, ເຕັກນິກວິຊາການ ເຂົ້າໃນການພັດທະນາຄົນພິການ.

ລັດ ນຳໃຊ້ມາດຕະການທີ່ຈຳເປັນເພື່ອປົກປ້ອງ ແລະສະກັດກັ້ນທຸກຮູບການຈຳແນກ, ສຽດສີ, ເຍາະເຍີ້ຍ, ການໃຊ້ຄວາມຮຸນແຮງ, ການລ່ວງລະເມີດທາງດ້ານຮ່າງກາຍ, ເພດ, ຈິດໃຈ, ກຽດສັກສີ ແລະການສະແຫວງຫາຜົນປະໂຫຍດ ຈາກຄົນພິການ.

## ມາດຕາ 5 ຫຼັກການລວມ

1. ຮັບປະກັນສິດສະເໝີພາບດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ລະຫວ່າງ ຄົນພິການ ແລະ ຄົນບໍ່ພິການ;
2. ຮັບປະກັນບໍ່ໃຫ້ມີການຈຳແນກ, ສຽດສີ, ເຍາະເຍີ້ຍ, ການໃຊ້ຄວາມຮຸນແຮງ, ການລ່ວງລະເມີດທາງດ້ານຮ່າງກາຍ, ເພດ, ຈິດໃຈ, ກຽດສັກສີ ແລະການສະແຫວງຫາຜົນປະໂຫຍດຈາກຄົນພິການ;
3. ຮັບປະກັນການຄຸ້ມຄອງ ແລະຈັດຕັ້ງປະຕິບັດນະໂຍບາຍຕໍ່ຄົນພິການ ເປັນເອກະພາບກັນທົ່ວປະເທດ;
4. ຮັບປະກັນສິ່ງອຳນວຍຄວາມສະດວກ ເພື່ອເຂົ້າເຖິງການບໍລິການ, ສະຖານທີ່ສາທາລະນະ, ຂໍ້ມູນຂ່າວສານ ແລະການຄົມມະນາຄົມ;
5. ສົ່ງເສີມການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ເຂົ້າໃນການປົກປ້ອງ, ຊ່ວຍເຫຼືອ ແລະພັດທະນາຄົນພິການ;
6. ສົ່ງເສີມການຮ່ວມມືສາກົນ, ພາກພື້ນ ເພື່ອປະຕິບັດພັນທະລັດພາຄີ ແລະເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານເຕັກນິກ, ວິຊາການ ແລະທຶນຮອນເຂົ້າໃນການພັດທະນາຄົນພິການ.

## ມາດຕາ 6 ພັນທະຂອງຄົນພິການ

ຄົນພິການ ມີພັນທະເຄົາລົບ ແລະປະຕິບັດລັດຖະທຳມະນູນ, ກົດໝາຍ ແລະປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຕາມຄວາມຮູ້, ຄວາມສາມາດ ແລະເງື່ອນໄຂຕົວຈິງ.

## ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ແລະຮ່ວມມືກັບສາກົນ ກ່ຽວກັບການປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ຍາດແຍ່ງການຊ່ວຍເຫຼືອທຶນຮອນ ແລະ ເຕັກນິກວິຊາການເພື່ອພັດທະນາຄົນພິການ, ປະຕິບັດສົນທິສັນຍາ ແລະສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ມາດຕາ 8 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບຄົນພິການທຸກເພດ, ໄວ ທີ່ເປັນພົນລະເມືອງລາວ ໂດຍບໍ່ຈຳແນກຄວາມເປັນພິການ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງລັດ, ອົງການຈັດຕັ້ງຂອງສັງຄົມ ທີ່ເຄື່ອນໄຫວວຽກງານກ່ຽວກັບຄົນພິການ ຢູ່ ສປປ ລາວ.

# ໝວດທີ 2
## ສິດ ແລະຄວາມສະເໝີພາບຂອງຄົນພິການ

**ມາດຕາ 9 ຄວາມສະເໝີພາບຂອງຄົນພິການ**

ຄົນພິການ ໂດຍບໍ່ຈຳແນກເພດ, ໄວ, ເຊື້ອຊາດ, ຊົນເຜົ່າ, ພາສາ, ຄວາມເຊື່ອຖື, ສາເຫດຂອງຄວາມເປັນພິການ, ຖານະທາງດ້ານເສດຖະກິດ, ວັດທະນະທຳ ແລະສັງຄົມ ລ້ວນແຕ່ມີຄວາມສະເໝີພາບເທົ່າທຽມກັບຄົນບໍ່ພິການ ຕໍ່ໜ້າກົດໝາຍ.

**ມາດຕາ 10 ສິດສະເໝີພາບທາງດ້ານການເມືອງ**

ຄົນພິການ ມີສິດສະເໝີພາບທາງດ້ານການເມືອງ ເຊັ່ນ ສິດເລືອກຕັ້ງ, ສະໝັກຮັບເລືອກຕັ້ງ, ເຂົ້າຮ່ວມໃນການເຄື່ອນໄຫວວຽກງານ, ປຶກສາຫາລື, ຕົກລົງບັນຫາສຳຄັນຂອງຊາດ, ແຕ່ງຕັ້ງເຂົ້າໃນຕຳແໜ່ງຂັ້ນຕ່າງໆຂອງບັນດາອົງການຈັດຕັ້ງ, ແນວລາວສ້າງຊາດ, ການຈັດຕັ້ງມະຫາຊົນ ແລະການຈັດຕັ້ງທາງສັງຄົມ ຕາມເງື່ອນໄຂ ແລະຄວາມສາມາດຂອງຄົນພິການ.

**ມາດຕາ 11 ສິດສະເໝີພາບທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ**

ຄົນພິການ ມີສິດສະເໝີພາບ ໃນການເຄື່ອນໄຫວທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ເຊັ່ນ ການດຳເນີນທຸລະກິດ, ການຄ້າ, ການບໍລິການ, ກິລາ-ກາຍຍະກຳ, ສິລະປະວັນນະຄະດີ, ຮີດຄອງປະເພນີ, ການສຶກສາ, ສາທາລະນະສຸກ, ການຄົ້ນຄວ້າປະດິດສ້າງທາງດ້ານເຕັກນິກ-ວິທະຍາສາດ ຕາມເງື່ອນໄຂ ແລະຄວາມສາມາດຕົວຈິງ.

**ມາດຕາ 12 ສິດສະເໝີພາບທາງດ້ານຄອບຄົວ**

ຄົນພິການ ມີສິດສະເໝີພາບເທົ່າທຽມກັນກັບສະມາຊິກທຸກຄົນໃນຄອບຄົວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຄອບຄົວ ແລະລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 13 ສິດສະເໝີພາບຂອງແມ່ຍິງພິການ**

ແມ່ຍິງພິການ ມີສິດສະເໝີພາບ ແລະມີຄຸນຄ່າເທົ່າທຽມກັນກັບທຸກຄົນໃນສັງຄົມ ໃນການພັດທະນາຕົນເອງ, ເຄື່ອນໄຫວວຽກງານທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະຄອບຄົວ ຕາມລະບຽບກົດໝາຍ.

**ມາດຕາ 14 ສິດສະເໝີພາບຂອງເດັກນ້ອຍພິການ**

ເດັກນ້ອຍພິການ ມີສິດໄດ້ຮັບການປົກປ້ອງສິດ ແລະຜົນປະໂຫຍດຕາມລະບຽບກົດໝາຍ ເປັນຕົ້ນໄດ້ຮັບການສຶກສາ, ການຝຶກວິຊາຊີບ, ການລ້ຽງດູ, ການຟື້ນຟູ, ການປິ່ນປົວສຸຂະພາບ ແລະການເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານ ເທົ່າທຽມກັບເດັກນ້ອຍທີ່ບໍ່ພິການ.

ເດັກນ້ອຍພິການ ມີສິດປະກອບຄໍາເຫັນທີ່ພົວພັນເຖິງສິດ ແລະຜົນປະໂຫຍດຂອງຕົນເທົ່າທຽມກັບເດັກນ້ອຍທີ່ບໍ່ພິການ, ຄໍາເຫັນຂອງເດັກນ້ອຍພິການ ຕ້ອງໄດ້ຮັບການພິຈາລະນາແກ້ໄຂຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 15 ສິດໃນການຮ້ອງທຸກ**

ຄົນພິການ ມີສິດສະເໜີ, ຮ້ອງຟ້ອງ ແລະຮ້ອງຂໍຄວາມເປັນທໍາຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອພິຈາລະນາໃນກໍລະນີທີ່ຖືກລະເມີດສິດ ຫຼືບໍ່ໄດ້ຮັບຄວາມເປັນທໍາ.

ອົງການທີ່ກ່ຽວຂ້ອງກັບການແກ້ໄຂຄໍາຮ້ອງທຸກ ຕ້ອງໄດ້ອໍານວຍຄວາມສະດວກ, ໃຫ້ການຊ່ວຍເຫຼືອ ແລະໃຫ້ຄວາມເປັນທໍາຢ່າງເທົ່າທຽມກັບຄົນບໍ່ພິການ.

## ໝວດທີ 3
## ການປ້ອງກັນ, ປິ່ນປົວ ແລະຟື້ນຟູສຸຂະພາບ

**ມາດຕາ 16 ການປ້ອງກັນຄວາມເປັນພິການ**

ການປ້ອງກັນຄວາມເປັນພິການ ປະກອບມີ ດັ່ງນີ້:

1. ໂຄສະນາປູກຈິດສໍານຶກກ່ຽວກັບການປ້ອງກັນການເປັນພິການ;
2. ການເບິ່ງແຍງທາງການແພດໃນເວລາຖືພາ ແລະອອກລູກ;
3. ການຢອດຢາ ແລະສັກຢາກັນພະຍາດ;
4. ການປະຕິບັດນະໂຍບາຍໂພຊະນາການ ເພື່ອຄວາມຈະເລີນເຕີບໂຕຂອງເດັກ;
5. ການປິ່ນປົວ ແລະການຟື້ນຟູສຸຂະພາບໃຫ້ຖືກຕ້ອງ ແລະທັນເວລາ;
6. ການປ້ອງກັນອຸປະຕິເຫດທ້ອງຖະໜົນ, ອຸປະຕິເຫດແຮງງານ ແລະ ອື່ນໆ.

**ມາດຕາ 17 ການປິ່ນປົວສຸຂະພາບ**

ຄົນພິການ ໄດ້ຮັບການບໍລິການກັນພະຍາດ, ກວດກາ, ປິ່ນປົວ, ຟື້ນຟູສຸຂະພາບຢູ່ໂຮງໝໍ, ສຸກສາລາ, ຫ້ອງກວດພະຍາດ ແລະສະຖານທີ່ບໍາບັດຕ່າງໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

ຄ່າບໍລິການ ແລະຄ່າປິ່ນປົວສໍາລັບຄົນພິການ ລວມທັງຄົນພິການທີ່ທຸກຍາກ, ອະນາຖາ ແລະຄົນພິການທີ່ບໍ່ສາມາດຊ່ວຍຕົນເອງໄດ້ ແລະບໍ່ມີຜູ້ດູແລ ໄດ້ກໍານົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 18 ການຟື້ນຟູສຸຂະພາບ**

ຄົນພິການ ໄດ້ຮັບການຟື້ນຟູ, ການບໍາບັດທາງດ້ານຮ່າງກາຍ, ການບໍລິການດ້ານການສັນຍະກໍາຮ່າງກາຍ, ການສະໜອງອຸປະກອນ, ເຄື່ອງຄໍ້າຊູ ແລະເຄື່ອງຊ່ວຍຊູຕ່າງໆ ຕາມຫຼັກວິຊາການແພດ.

ຄ່າບໍລິການ, ຄ່າຟື້ນຟູ, ຄ່າບໍາບັດ, ຄ່າອຸປະກອນ, ເຄື່ອງຄໍ້າຊູ ແລະເຄື່ອງຊ່ວຍຊູສໍາລັບຄົນພິການທີ່ທຸກຍາກ, ອະນາຖາ ແລະຄົນພິການທີ່ບໍ່ສາມາດຊ່ວຍເຫຼືອຕົນເອງ ແລະບໍ່ມີຜູ້ດູແລ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

ຄົນພິການ ແລະຄອບຄົວທີ່ຢູ່ເຂດຊົນນະບົດ ແລະຫ່າງໄກສອກຫຼີກ ຕ້ອງໄດ້ຮັບການສະໜອງຂໍ້ມູນຂ່າວສານ ກ່ຽວກັບສູນການແພດຟື້ນຟູໜ້າທີ່ການ ແລະສະຖານທີ່ໃຫ້ຄວາມຊ່ວຍເຫຼືອດ້ານອຸປະກອນ, ເຄື່ອງຄໍ້າຊູ ແລະເຄື່ອງຊ່ວຍຊູ.

ການຟື້ນຟູຄົນພິການ ໃຫ້ມີການປະສານສົມທົບລະຫວ່າງ ການຟື້ນຟູຢູ່ໂຮງໝໍ, ສູນການແພດຟື້ນຟູໜ້າທີ່ການ, ການຟື້ນຟູຢູ່ຂັ້ນຊຸມຊົນ ແລະຈາກຄອບຄົວຂອງຄົນພິການ.

## ໝວດທີ 4
## ການຄົ້ນຄວ້າວິທະຍາສາດ ແລະຜະລິດອຸປະກອນກ່ຽວກັບຄົນພິການ

### ມາດຕາ 19 ການຄົ້ນຄວ້າວິທະຍາສາດ ແລະການຝຶກບຸກຄະລາກອນ

ລັດ ໃຫ້ທຶນຊ່ວຍເຫຼືອແກ່ໂຄງການຄົ້ນຄວ້າວິທະຍາສາດກ່ຽວກັບຄົນພິການ ເປັນຕົ້ນການຄົ້ນຄວ້າເຖິງສາເຫດ ແລະວິທີແກ້ໄຂຄວາມເປັນພິການ, ການສັນຍະກໍາຕົບແຕ່ງຮ່າງກາຍ ໂດຍນໍາໃຊ້ເຕັກນິກທີ່ທັນສະໄໝ, ການຝຶກອົບຮົມບຸກຄະລາກອນ ດ້ານການຟື້ນຟູບໍາບັດຄົນພິການ.

ຫລັກສູດສໍາລັບການຟື້ນຟູທາງການແພດ ຕ້ອງໄດ້ຮັບການປັບປຸງໃຫ້ສອດຄ່ອງກັບຄວາມກ້າວໜ້າຂອງການພັດທະນາ. ກະຊວງສາທາລະນະສຸກ ແລະພາກສ່ວນທີ່ກ່ຽວຂ້ອງຕ້ອງຊຸກຍູ້ ແລະສົ່ງເສີມໃຫ້ມີການພັດທະນາຫຼັກສູດການສຶກສາກ່ຽວກັບການປິ່ນປົວ ແລະຟື້ນຟູທາງການແພດສໍາລັບຄົນພິການ ລວມທັງການຈັດຕັ້ງໜ່ວຍງານກວດກາ, ຕີລາຄາການເສຍກໍາລັງແຮງງານຂອງຄົນພິການ.

### ມາດຕາ 20 ການຜະລິດອຸປະກອນ, ເຄື່ອງຄໍ້າຊູ ແລະ ເຄື່ອງຊ່ວຍຊູ

ລັດລົງທຶນ ແລະຊຸກຍູ້, ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທັງພາກລັດ ແລະເອກະຊົນ ໃນການຜະລິດອຸປະກອນ, ເຄື່ອງຄໍ້າຊູ ແລະເຄື່ອງຊ່ວຍຊູ ເພື່ອຊ່ວຍເຫຼືອຄົນພິການໃນການດໍາລົງຊີວິດ, ການຮໍ່າຮຽນ ແລະການປະຕິບັດວຽກງານ ໂດຍນໍາໃຊ້ວັດຖຸ ແລະອຸປະກອນການຜະລິດຈາກພາຍໃນ ແລະຕ່າງປະເທດ.

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທັງພາກລັດ ແລະເອກະຊົນທີ່ຜະລິດອຸປະກອນ, ເຄື່ອງຄໍ້າຊູ ແລະເຄື່ອງຊ່ວຍຊູເພື່ອຄົນພິການ ມີສິດກູ້ຢືມເງິນເພື່ອທໍາການຜະລິດ ຈາກສະຖາບັນການເງິນຂອງລັດ ໃນອັດຕາດອກເບ້ຍສົ່ງເສີມ.

ເອກະສານ, ອຸປະກອນ, ເຄື່ອງປະກອບ ແລະພາຫະນະທີ່ຈໍາເປັນໃນການຊ່ວຍເຫຼືອ ທີ່ນໍາເຂົ້າມາຈາກຕ່າງປະເທດ ເພື່ອຮັບໃຊ້ວຽກງານການພັດທະນາຄົນພິການ ມີສິດໄດ້ຮັບນະໂຍບາຍຍົກເວັ້ນພາສີ, ອາກອນນໍາເຂົ້າ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 5
## ການສຶກສາ, ກິລາ-ກາຍຍະກຳສຳລັບຄົນພິການ

### ມາດຕາ 21 ການສຶກສາຮຽນຮ່ວມສຳລັບຄົນພິການ

ການສຶກສາຮຽນຮ່ວມສຳລັບຄົນພິການ ມີດັ່ງນີ້:

1. ຄົນພິການສາມາດຮຽນຮ່ວມ ຢູ່ໃນສະຖານການສຶກສາທຸກແຫ່ງຂອງລັດ ຕາມເງື່ອນໄຂ ແລະຄວາມສາມາດຕົວຈິງ;
2. ສະຖານການສຶກສາ ຕ້ອງໄດ້ປະກອບສິ່ງອຳນວຍຄວາມສະດວກ ທີ່ຈຳເປັນສຳລັບຄົນພິການ ຄື:
   - ຫ້ອງຮຽນ ແລະສະຖານທີ່ຮຽນທີ່ເໝາະສົມ;
   - ຫຼັກສູດການຮຽນ-ການສອນ ທີ່ສອດຄ່ອງກັບປະເພດຄວາມເປັນພິການ;
   - ວັດຖຸອຸປະກອນສຳລັບການຮຽນ-ການສອນ;
   - ສະພາບແວດລ້ອມທີ່ເອື້ອອຳນວຍ ພາຍໃນສະຖານການສຶກສາ.
3. ດຳເນີນການຄົ້ນຄວ້າຫຼັກສູດ, ອຸປະກອນ ແລະວິທີການຮຽນ-ການສອນ;
4. ສ້າງຄູສອນ ແລະຜູ້ດູແລນັກຮຽນພິການແຕ່ລະປະເພດ ຢ່າງເໝາະສົມ.

### ມາດຕາ 22 ການສຶກສາສະເພາະສຳລັບຄົນພິການ

ສ້າງຕັ້ງໂຮງຮຽນສະເພາະ ສຳລັບນັກຮຽນພິການ ຜູ້ທີ່ບໍ່ສາມາດເຂົ້າຮຽນຮ່ວມໄດ້ ເຊັ່ນ ຄົນພິການທາງດ້ານສະຕິປັນຍາ, ທາງດ້ານການເບິ່ງເຫັນ, ການໄດ້ຍິນ, ການປາກເວົ້າ ແລະອື່ນໆ.

ສົ່ງເສີມໃຫ້ພາກເອກະຊົນ ແລະອົງການຈັດຕັ້ງສັງຄົມ ສ້າງຕັ້ງໂຮງຮຽນ, ພັດທະນາຫຼັກສູດ ແລະອຸປະກອນເຂົ້າໃນການສຶກສາສະເພາະ ສຳລັບຄົນພິການ ໂດຍຜ່ານການເຫັນດີຈາກຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 23 ການໃຊ້ຈ່າຍໃນການສຶກສາຂອງຄົນພິການ

ນັກຮຽນພິການ ຕ້ອງໄດ້ຮັບນະໂຍບາຍຫຼຸດຜ່ອນ ຫຼືຍົກເວັ້ນຄ່າທຳນຽມ ແລະຄ່າໃຊ້ຈ່າຍໃນການຮ່ຳຮຽນຈາກສະຖານການສຶກສາຂອງລັດ ຕາມລະບຽບການ.

ສຳລັບຜູ້ທີ່ຮຽນເກັ່ງຈະໄດ້ຮັບທຶນການສຶກສາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ.

### ມາດຕາ 24 ກິລາ-ກາຍຍະກຳສຳລັບຄົນພິການ

ລັດ ສົ່ງເສີມໃຫ້ມີການເຄື່ອນໄຫວກິລາ-ກາຍຍະກຳປະເພດຕ່າງໆ ຂອງຄົນພິການ ໂດຍການຈັດຕັ້ງຝຶກອົບຮົມຄູຝຶກ, ນັກກິລາ, ສະຖານທີ່ຝຶກແອບ, ສະຖານທີ່ແຂ່ງຂັນ ລວມທັງການສະໜອງອຸປະກອນຮັບໃຊ້ໃຫ້ແກ່ການເຄື່ອນໄຫວ ແລະການແຂ່ງຂັນໃນລະດັບທ້ອງຖິ່ນ, ລະດັບຊາດ, ພາກພື້ນ ແລະສາກົນ.

## ໝວດທີ 6
## ການຝຶກວິຊາຊີບ ແລະພັດທະນາສີມືແຮງງານຂອງຄົນພິການ

**ມາດຕາ 25 ການຝຶກວິຊາຊີບ ແລະພັດທະນາສີມືແຮງງານ**

ການຝຶກວິຊາຊີບ ແລະພັດທະນາສີມືແຮງງານຂອງຄົນພິການ ມີດັ່ງນີ້:

1. ຄົນພິການສາມາດເຂົ້າຝຶກວິຊາຊີບ ແລະພັດທະນາສີມືແຮງງານ ຢູ່ສະຖານທີ່ຝຶກວິຊາຊີບ ແລະ ບັນດາສູນພັດທະນາສີມືແຮງງານຂອງລັດ ແລະເອກະຊົນ ຕາມຄວາມເໝາະສົມ;
2. ສະຖານຝຶກວິຊາຊີບ ແລະສູນພັດທະນາສີມືແຮງງານ ຕ້ອງໄດ້ສ້າງສິ່ງອໍານວຍຄວາມສະດວກ ທີ່ເໝາະສົມ ແລະສອດຄ່ອງກັບຈຸດພິເສດຂອງຄົນພິການ ເປັນຕົ້ນສະຖານທີ່, ອຸປະກອນ, ຫຼັກສູດ, ວິທີການຮຽນ-ການສອນ;
3. ຄູຝຶກວິຊາຊີບ ແລະພັດທະນາສີມືແຮງງານໃຫ້ຄົນພິການ ຕ້ອງໄດ້ຮັບການຍົກລະດັບຄວາມຮູ້, ຄວາມສາມາດ ແລະເຕັກນິກທີ່ເໝາະສົມ.

**ມາດຕາ 26 ການສະໜັບສະໜູນໃນການຝຶກວິຊາຊີບ ແລະການພັດທະນາສີມືແຮງງານ**

ຄົນພິການ ໄດ້ຮັບນະໂຍບາຍທຶນຮຽນ, ຫຼຸດຜ່ອນ ຫຼືຍົກເວັ້ນຄ່າຝຶກ, ທີ່ພັກ ແລະການນໍາໃຊ້ອຸປະກອນໃຫ້ແກ່ຄົນພິການ ໃນການຝຶກວິຊາຊີບ ແລະພັດທະນາສີມືແຮງງານ.

ສະຖານທີ່ຝຶກວິຊາຊີບ ແລະສູນພັດທະນາສີມືແຮງງານ ມີໜ້າທີ່ໃຫ້ຄໍາປຶກສາ, ແນະນໍາ, ການເລືອກ ແລະປະກອບອາຊີບທີ່ເໝາະສົມສໍາລັບຄົນພິການ ໂດຍບໍ່ເສຍຄ່າ.

## ໝວດທີ 7
## ການປະກອບອາຊີບຂອງຄົນພິການ

**ມາດຕາ 27 ການມີວຽກເຮັດງານທໍາຂອງຄົນພິການ**

ຄົນພິການ ມີສິດເຂົ້າເຮັດວຽກໃນຂະແໜງການຕ່າງໆຂອງລັດ ແລະເອກະຊົນຕາມຄວາມຮູ້, ຄວາມສາມາດ ໂດຍໄດ້ຮັບຄ່າຕອບແທນ, ເງິນເດືອນ, ການເລື່ອນຊັ້ນ, ຕໍາແໜ່ງ, ການຍົກລະດັບ ແລະອື່ນໆ ຢ່າງສະເໝີພາບກັບຄົນບໍ່ພິການ.

ຜູ້ໃຊ້ແຮງງານ ຕ້ອງປະກອບສິ່ງອໍານວຍຄວາມສະດວກໃຫ້ຄົນພິການໃນການເຮັດວຽກ ຕາມຄວາມເໝາະສົມ.

ລັດ ມີນະໂຍບາຍສະຫງວນອາຊີບທີ່ເໝາະສົມ ສໍາລັບຄົນພິການ ເພື່ອໃຫ້ເຂົາເຈົ້າມີວຽກເຮັດງານທໍາ, ມີລາຍໄດ້ສາມາດກຸ້ມຕົນເອງ.

**ມາດຕາ 28 ການຮັບເອົາຄົນພິການເຂົ້າເຮັດວຽກ**

ຂະແໜງການຕ່າງໆຂອງລັດ ແລະເອກະຊົນ ຕ້ອງໃຫ້ບູລິມະສິດຮັບເອົາຄົນພິການເຂົ້າເຮັດວຽກ ຕາມຄວາມສາມາດ, ຄວາມຊໍານານງານ ແລະຕໍາແໜ່ງງານທີ່ເໝາະສົມ.

**ມາດຕາ 29 ການສົ່ງເສີມທຸລະກິດຂອງຄົນພິການ**

ຄົນພິການທີ່ດໍາເນີນທຸລະກິດຂອງຕົນເອງ ແລະກຸ່ມການຜະລິດ ຫຼືການບໍລິການໃດໜຶ່ງ ຈະໄດ້ຮັບນະໂຍບາຍໃນການກູ້ຢືມເງິນ, ຫຼຸດຜ່ອນ ຫຼືຍົກເວັ້ນອາກອນ, ຄ່າທໍານຽມຕາມລະບຽບການທີ່ກ່ຽວຂ້ອງ ລວມທັງໄດ້ຮັບການຖ່າຍທອດເຕັກນິກ, ເຕັກໂນໂລຊີ, ແນະນໍາການຜະລິດ ແລະການຕະຫຼາດຕາມຄວາມເໝາະສົມ.

## ໝວດທີ 8
## ການເຂົ້າເຖິງຂໍ້ມູນຂ່າວສານ, ສະຖານທີ່ ແລະການຂົນສົ່ງສາທາລະນະ

**ມາດຕາ 30 ການເຂົ້າເຖິງຂໍ້ມູນຂ່າວສານ**

ຄົນພິການ ສາມາດເຂົ້າເຖິງຂໍ້ມູນຂ່າວສານ ໂດຍຜ່ານສື່ສິ່ງພິມ, ສື່ອີເລັກໂທຣນິກ, ເຕັກໂນໂລຊີທີ່ທັນສະໄໝ ແລະການບໍລິການທາງດ້ານໂທລະຄົມມະນາຄົມ ຕາມຄວາມເໝາະສົມ.

**ມາດຕາ 31 ການເຂົ້າເຖິງສະຖານທີ່ສາທາລະນະ**

ສະຖານທີ່ສາທາລະນະ ຕ້ອງສ້າງສິ່ງອໍານວຍຄວາມສະດວກໃຫ້ຄົນພິການ ເປັນຕົ້ນ ທາງເນີນ, ຮາວຂັ້ນໄດ, ລິບ, ຫ້ອງນໍ້າ ແລະເຄື່ອງໝາຍອື່ນໆ.

**ມາດຕາ 32 ການເຂົ້າເຖິງການຂົນສົ່ງສາທາລະນະ**

ຄົນພິການ ຈະໄດ້ຮັບຄວາມສະດວກ ໃນການສັນຈອນໄປມາ ເປັນຕົ້ນ ການຈັດສັນບ່ອນນັ່ງສະເພາະ, ການຍົກເວັ້ນ ຫຼືຫຼຸດຜ່ອນຄ່າໂດຍສານ ແລະຄ່າບໍລິການຕ່າງໆ ຕາມຄວາມສາມາດ ແລະເງື່ອນໄຂຕົວຈິງ.

## ໝວດທີ 9
## ການໃຫ້ສະຫວັດດີການສັງຄົມແກ່ຄົນພິການ

**ມາດຕາ 33 ການຊ່ວຍເຫຼືອ ແລະເບິ່ງແຍງຄົນພິການ**

ຄອບຄົວ, ການຈັດຕັ້ງຂອງລັດ ແລະເອກະຊົນທັງພາຍໃນ ແລະຕ່າງປະເທດ ຕ້ອງມີສ່ວນຮ່ວມໃນການດູແລ, ປັບປຸງຊີວິດການເປັນຢູ່ຂອງຄົນພິການ ໂດຍສະໜອງອາຫານ, ເຄື່ອງນຸ່ງຫົ່ມ, ທີ່ຢູ່ອາໄສ, ຢາປົວພະຍາດ ແລະສະພາບແວດລ້ອມທີ່ດີ.

ສໍາລັບຄົນພິການທີ່ທຸກຍາກ, ອະນາຖາ, ເຖົ້າແກ່ ແລະຄອບຄົວຄົນພິການທີ່ທຸກຍາກ ຊຶ່ງບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຈະໄດ້ຮັບນະໂຍບາຍອຸດໜູນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 34 ການອຸດໜູນລ້ຽງດູຄົນພິການ**

ອົງການປົກຄອງຂັ້ນຕ່າງໆ ຕ້ອງປະສານສົມທົບກັບອົງການຈັດຕັ້ງສັງຄົມ ໃນການຈັດຕັ້ງລ້ຽງດູຄົນພິການທີ່ທຸກຍາກ, ອານາຖາ, ເຖົ້າແກ່ ແລະຄອບຄົວຄົນພິການທີ່ທຸກຍາກ ຊຶ່ງບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ດ້ວຍການໃຫ້ການຊ່ວຍເຫຼືອຕາມຄວາມເໝາະສົມ.

ໃນກໍລະນີທີ່ຈໍາເປັນຕ້ອງຈັດຫາຜູ່ດູແລ, ການອຸດໜູນຜູ່ດູແລ, ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 10
## ອົງການຄຸ້ມຄອງ ແລະກວດກາ
## ການປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ

**ມາດຕາ 35 ອົງການຄຸ້ມຄອງ ແລະກວດກາ**

ລັດຖະບານ ເປັນຜູ່ຄຸ້ມຄອງ ແລະກວດກາການຈັດຕັ້ງປະຕິບັດ ວຽກງານການປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍແມ່ນ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການປະສານສົມທົບກັບ ຂະແໜງການອື່ນທີ່ກ່ຽວຂ້ອງ, ຄະນະກໍາມະການແຫ່ງຊາດເພື່ອຄົນພິການ ແລະຜູ້ອາຍຸສູງ, ອົງການຈັດຕັ້ງທີ່ເປັນຕົວແທນຂອງຄົນພິການ ແລະການຈັດຕັ້ງອື່ນ ແຕ່ສູນກາງລົງຮອດທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ການຈັດຕັ້ງ ແລະການເຄື່ອນໄຫວຂອງ ອົງການຄຸ້ມຄອງ ແລະກວດກາ ລະອຽດໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 36 ສິດ ແລະໜ້າທີ່ຂອງອົງການຄຸ້ມຄອງ ແລະກວດກາ**

ອົງການຄຸ້ມຄອງ ແລະກວດກາວຽກງານປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ ມີສິດ ແລະໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບການປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ ເພື່ອສະເໜີລັດຖະບານພິຈາລະນາ;
2. ຄົ້ນຄວ້າ ແລະປະກອບຄໍາເຫັນຕໍ່ສົນທິສັນຍາ ແລະສັນຍາສາກົນກ່ຽວກັບຄົນພິການ ສະເໜີລັດຖະບານ ພິຈາລະນາຮັບຮອງ ຫຼືຍົກເລີກ;
3. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ສົນທິສັນຍາ, ສັນຍາສາກົນ ອອກເປັນແຜນການ, ແຜນງານ, ໂຄງການລະອຽດ ເພື່ອຈັດຕັ້ງປະຕິບັດ;

4. ໂຄສະນາ, ເຜີຍແຜ່ແນວທາງນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ;
5. ສ້າງ, ບຳລຸງພະນັກງານວິຊາການ ກ່ຽວກັບວຽກງານການປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ;
6. ຊຸກຍູ້, ຊີ້ນຳ, ຕິດຕາມ, ກວດກາການຈັດຕັ້ງປະຕິບັດ ແນວທາງນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ;
7. ສ້າງຖານຂໍ້ມູນ, ສະຖິຕິ ກ່ຽວກັບຄົນພິການ ໃນຂອບເຂດທົ່ວປະເທດ;
8. ຄົ້ນຄວ້າ, ປະກອບຄຳເຫັນຕໍ່ການສະເໜີຂໍສ້າງຕັ້ງສະມາຄົມ, ມູນນິທິ ທີ່ກ່ຽວກັບຄົນພິການ;
9. ອຳນວຍຄວາມສະດວກໃຫ້ບັນດາສະມາຄົມ, ມູນນິທິ ແລະອົງການທີ່ບໍ່ສັງກັດລັດຖະບານ ໃນການເຄື່ອນໄຫວວຽກງານກ່ຽວກັບຄົນພິການ;
10. ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງກັບວຽກງານປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ;
11. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະອົງການຈັດຕັ້ງສາກົນ ກ່ຽວກັບວຽກງານປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ;
12. ສະຫຼຸບ, ລາຍງານວຽກງານກ່ຽວກັບການປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການໃຫ້ລັດຖະບານ ຢ່າງເປັນປົກກະຕິ;
13. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ11
## ກອງທຶນພັດທະນາຄົນພິການ

### ມາດຕາ 37 ການສ້າງຕັ້ງກອງທຶນພັດທະນາຄົນພິການ

ກອງທຶນພັດທະນາຄົນພິການ ສ້າງຕັ້ງຂຶ້ນເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານ ການປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ ຕາມເງື່ອນໄຂ ແລະຄວາມສາມາດຕົວຈິງ.

ແຫຼ່ງລາຍຮັບຂອງ ກອງທຶນພັດທະນາຄົນພິການ ໄດ້ມາຈາກ

1. ງົບປະມານຂອງລັດ;
2. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະອົງການຈັດຕັ້ງອື່ນ ທັງພາຍໃນ ແລະຕ່າງປະເທດ;
3. ການຈັດຕັ້ງເຄື່ອນໄຫວກິດຈະກຳຕ່າງໆ.

### ມາດຕາ 38 ການຄຸ້ມຄອງ ແລະການນຳໃຊ້ກອງທຶນ

ການຄຸ້ມຄອງ ແລະການນຳໃຊ້ກອງທຶນພັດທະນາຄົນພິການ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 12
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 39 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຂອງລັດ ແລະສັງຄົມ ທີ່ມີຜົນງານດີເດັ່ນໃນການປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະນະໂຍບາຍຕ່າງໆຕາມລະບຽບການ.

**ມາດຕາ 40 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຂອງລັດ ແລະສັງຄົມ ຫາກໄດ້ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ຕັກເຕືອນ, ປັບໃໝ ຫຼືລົງໂທດ ຕາມລະບຽບກົດໝາຍ.

## ໝວດທີ 13
## ບົດບັນຍັດສຸດທ້າຍ

**ມາດຕາ 41 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງແຮງງານ ແລະສະຫວັດດີການສັງຄົມ ເປັນເຈົ້າການປະສານສົມທົບກັບ ຄະນະກຳມະການແຫ່ງຊາດເພື່ອຄົນພິການ ແລະພາກສ່ວນກ່ຽວຂ້ອງທັງສູນກາງ ແລະທ້ອງຖິ່ນ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະອົງການຈັດຕັ້ງສັງຄົມ ຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 42 ວັນຄົນພິການແຫ່ງ ສປປ ລາວ**

ລັດຖະບານ ກຳນົດເອົາວັນທີ 27 ກັນຍາ ເປັນວັນຄົນພິການແຫ່ງຊາດ.

**ມາດຕາ 43 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະບານແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ